**ການໃຫ້ໂອກາດເທົ່າທຽມກັນ ແມ່ນກົດໝາຍບ້ານເມືອງ**

**ອົງການນີ້ໄດ້ຮັບເງິນຊ່ວຍເຫລືອຈາກຣັຖບານກາງ ເພາະສະນັ້ນກໍເປັນການລະເມີດຕໍ່ກົດໝາຍຖ້າອົງການນີ້ຫາກເລືອກປະຕິບັດເພາະເຫດຜົນຢ່າງໃດໜຶ່ງຕໍ່ໄປນີ້:**

ຖ້າເລືອກປະຕິບັດຕໍ່ບຸກຄົນໃດໃນສະຫະຣັຖອະເມຣິກາ, ໂດຍເຫດຜົນທາງເຊື້ອສາຍ, ສີຜິວ, ສາດສະໜາ, ເພດ, ສັນຊາດດັ້ງເດີມ, ອາຍຸ, ການເສັຍອົງຄະ, ພັກຫລືລັດທິການເມືອງ, ຫລື,

ຖ້າເລືອກປະຕິບັດຕໍ່ຄົນທີ່ຮັບຜົນປະໂຫຍດຈາກໂຄງການໃດຊຶ່ງໂຄງການນັ້ນຫາກຮັບເງິນຊ່ວຍເຫລືອຈາກຣັຖບານກາງພາຍໃຕ້ຫົວຂໍ້ 1 ຂອງກົດໝາຍວ່າດ້ວຍການລົງທຶນພັດທະນາແຮງງານ ປີ 1998 (WIA), ໂດຍເຫດຜົນວ່າ ຄົນທີ່ຮັບຜົນປະໂຫຍດນັ້ນມີສັນຊາດຕ່າງດ້າວ/ສະຖານະຄົນເຂົ້າເມືອງໂດຍຖືກຕ້ອງຕາມກົດໝາຍທີ່ໄດ້ຮັບອະນຸຍາດເຮັດວຽກໃນສະຫະຣັຖ, ຫລືເປັນຄົນທີ່ເຂົ້າຮ່ວມໂຄງການຫລືກິດຈະກໍາໃດໆທີ່ໄດ້ທຶນພາຍໃຕ້ຫົວຂໍ້ 1 ຂອງກົດໝາຍ WIA.

**ຫ້າມອົງການທີ່ຮັບທຶນດັ່ງກ່າວຕ້ອງບໍ່ໃຫ້ເລືອກປະຕິບັດກ່ຽວກັບເລື່ອງໃດຕໍ່ໄປນີ້:**

ໃນການຕັດສິນໃຈຮັບຄົນ, ຫລືໃຫ້ໂອກາດຄົນ, ສູ່ໂຄງການຫລືກິດຈະກໍາໃດໆທີ່ໄດ້ທຶນພາຍໃຕ້ຫົວຂໍ້ 1 ຂອງກົດໝາຍ WIA;

ໃນການໃຫ້ໂອກາດໃນ, ຫລືການປະຕິບັດຕໍ່ບຸກຄົນໃດ, ກ່ຽວກັບໂຄງການຫລືກິດຈະກໍາດັ່ງກ່າວ; ຫລື

ໃນການຕັດສິນໃຈກ່ຽວກັບການວ່າຈ້າງ ໃນການບໍຣິຫານ ຫລືທີ່ກ່ຽວຂ້ອງກັບ ໂຄງການຫລືກິດຈະກໍາດັ່ງກ່າວ.

**ຄວນເຮັດຢ່າງໃດຖ້າທ່ານເຊື່ອວ່າທ່ານໄດ້ຖືກເລືອກປະຕິບັດ**

ຖ້າທ່ານຄິດວ່າທ່ານໄດ້ຖືກເລືອກປະຕິບັດຈາກໂຄງການຫລືກິດຈະກໍາໃດໆທີ່ໄດ້ທຶນພາຍໃຕ້ຫົວຂໍ້ 1 ຂອງກົດໝາຍ WIA, ທ່ານສາມາດຍື່ນຄໍາຮ້ອງທຸກພາຍໃນ 180 ມື້ ນັບຕັ້ງແຕ່ວັນທີທີ່ທ່ານຫາວ່າໄດ້ຖືກເລືອກປະຕິບັດ, ໂດຍຍື່ນຕໍ່ໜຶ່ງໃນສອງບ່ອນຕໍ່ໄປນີ້:

ເຈົ້າໜ້າທີ່ກວດກາໂອກາດເທົ່າທຽມກັນຂອງອົງການທີ່ຮັບທຶນດັ່ງກ່າວ (ຫລືບຸກຄົນທີ່ອົງການນັ້ນໄດ້ມອບໝາຍໃຫ້ເຮັດໜ້າທີ່ນີ້); ຫລື

ຜູ້ອໍານວຍການ, ສູນກາງສິດທິພົລເມືອງ/Civil Rights Center (CRC), U.S. Department of Labor,
200 Constitution Avenue NW, Room N-4123, Washington, DC 20210.

ຖ້າທ່ານຍື່ນຄໍາຮ້ອງທຸກໃຫ້ກັບອົງການທີ່ຮັບທຶນນັ້ນ, ທ່ານຈະຕ້ອງລໍຖ້າ ກ)ຈົນອົງການນັ້ນອອກໜັງສືແຈ້ງການປະຕິບັດການສຸດທ້າຍ, ຫລື ຂ)ຈົນ 90 ມື້ໄດ້ຜ່ານໄປ (ຂຶ້ນກັບວ່າໂຕໃດໄວກວ່າກັນ ກ ຫລື ຂ), ແລ້ວຈຶ່ງຍື່ນຄໍາຮ້ອງທຸກໃຫ້ກັບ ສູນກາງສິດທິພົລເມືອງ (CRC), U.S. Department of Labor, 200 Constitution Avenue NW, Room N-4123, Washington, DC 20210.

ຖ້າອົງການທີ່ຮັບທຶນນັ້ນບໍ່ອອກໜັງສືແຈ້ງການປະຕິບັດການສຸດທ້າຍໃຫ້ທ່ານພາຍໃນ 90 ມື້ ນັບຕັ້ງແຕ່ວັນທີທີ່ທ່ານໄດ້ຍື່ນຄໍາຮ້ອງທຸກ, ທ່ານບໍ່ຕ້ອງລໍຖ້າຮັບໜັງສືແຈ້ງນັ້ນອີກ ແຕ່ທ່ານຈະສາມາດຍື່ນຄໍາຮ້ອງທຸກໃຫ້ກັບ CRC ໄດ້ແລ້ວ.

ແຕ່ວ່າ ທ່ານຈຳເປັນຕ້ອງຍື່ນຄຳຮ້ອງທຸກໃຫ້ກັບ CRC ບໍ່ເກີນ 30 ມື້ຫລັງຈາກເສັ້ນຕາຍວັນທີ 90 (ເວົ້າອີກວິທີໜຶ່ງ: ພາຍໃນ 120 ມື້ນັບຕັ້ງແຕ່ທ່ານໄດ້ຍື່ນຄຳຮ້ອງທຸກໃຫ້ກັບອົງການທີ່ຮັບທຶນນັ້ນ.)

ຖ້າກໍລະນີອົງການທີ່ຮັບທຶນນັ້ນທາກອອກໜັງສືແຈ້ງການປະຕິບັດການສຸດທ້າຍກ່ຽວກັບຄຳຮ້ອງທຸກຂອງທ່ານ, ແຕ່ທ່ານບໍ່ພໍໃຈກັບຄຳຕັດສິນຫລືຄຳຕອບຂອງອົງການ, ທ່ານຈະສາມາດຍື່ນຄຳຮ້ອງທຸກໃຫ້ກັບ CRC ໄດ້. ທ່ານຈຳເປັນຕ້ອງຍື່ນຄຳຮ້ອງທຸກໃຫ້ກັບ CRC ພາຍໃນ 30 ມື້ນັບຕັ້ງແຕ່ວັນທີທີ່ທ່ານໄດ້ຮັບໜັງສືແຈ້ງການປະຕິບັດການສຸດທ້າຍນັ້ນ.

ຜູ້ຈັດການເລື່ອງໂອກາດເທົ່າທຽມກັນ/ຫ້ອງການທີ່ຣັຖອາຄັນຊໍມອບໝາຍໜ້າທີ່ກວດກາໂອກາດເທົ່າທຽມກັນ ກ່ຽວກັບທຶນ WIA ສຳລັບ ພະແນກບໍຣິການຄົນງານແຫ່ງຣັຖອາຄັນຊໍ ແມ່ນ:

Gloria D. Johnson<br>
Arkansas Department of Workforce Services<br>
P.O. Box 2981<br>
Little Rock, Arkansas 72203-2981<br>
ເລກໂທຣະສັບ: (501) 682-3106<br>
Gloria.Johnson@arkansas.gov

**ຄຳຮັບຮອງ**

ເພື່ອເປັນການປະຕິບັດໃຫ້ຖືກຕ້ອງຕາມເງື່ອນໄຂໃນການຮັບທຶນຊ່ວຍເຫລືອຈາກກະຊວງແຮງງານ (Department of Labor), ພາຍໃຕ້ຫົວຂໍ້ 1 ຂອງກົດໝາຍ WIA, ອົງການທີ່ສະໝັກຮັບທຶນນີ້ໃຫ້ຄຳຮັບຮອງວ່າຕົນຈະປະຕິບັດຕາມລະບຽບການທັງໝົດກ່ຽວກັບການບໍ່ໄຫ້ເລືອກປະຕິບັດແລະການໃຫ້ໂອກາດເທົ່າທຽມກັນ ຂອງປະມວນກົດໝາຍຕໍ່ໄປນີ້:

ຫົວຂໍ້ 6 ຂອງປະມວນກົດໝາຍວ່າດ້ວຍສິດທິພົລເມືອງ ປີ 1964

ມາດຕາ 504 ຂອງປະມວນກົດໝາຍວ່າດ້ວຍການຟື້ນຟູຄົນພິການ ປີ 1973

ປະມວນກົດໝາຍວ່າດ້ວຍການເລືອກປະຕິບັດຄົນອາຍຸສູງ ປີ 1975

ຫົວຂໍ້ 9 ຂອງບົດແກ້ໄຂປະມວນກົດໝາຍວ່າດ້ວຍການສຶກສາ ປີ 1972

**ນາຍຈ້າງ/ໂຄງການທີ່ໃຫ້ໂອກາດເທົ່າທຽມກັນ**

ອຸປະກອນເສີມແລະບໍຣິການຕ່າງໆມີໃຫ້ບໍຣິການຕາມຄວາມຕ້ອງການໃຫ້ແກ່ຄົນເສັຍອົງຄະ.